ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມສ່ວຍສາອາກອນ

ເລກທີ 0701 /ກສອ

ນະຄອນຫຼວງວຽງຈັນ, ວັນທີ 28 FEB 2022

## ຂໍ້ຕົກລົງ

## ວ່າດ້ວຍການຮອງຮັບເອົາ ໃບອະນຸຍາດນຳໃຊ້ ເຄື່ອງບັນທຶກ ການຂາຍສິນຄ້າ ແລະ ບໍລິການ

- ອີງຕາມກົດໝາຍວ່າດ້ວຍ ການຄຸ້ມຄອງສ່ວຍສາອາກອນ ສະບັບ(ປັບປຸງ) ເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019;
- ອີງຕາມ ຄຳແນະນຳ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ໃບເກັບເງິນສະເພາະທີ່ອອກດ້ວຍເຄື່ອງບັນທຶກການ ຂາຍສິນຄ້າ ແລະ ບໍລິການ ສະບັບເລກທີ 1178/ກງ, ລົງວັນທີ 20 ເມສາ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການ ຄຸ້ມຄອງ ແລະ ນຳໃຊ ເຄື່ອງບັນທຶກການຂາຍສິນຄ້າ ແລະ ບໍລິການ ສະບັບເລກທີ 1179/ກງ, ລົງວັນທີ 20 ເມາສາ 2017;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 2058/ກງ, ລົງວັນທີ 29 ເມສາ 2021.

**ຫົວໜ້າກົມສ່ວຍສາອາກອນຕົກລົງ:**

**ມາດຕາ 1:** ເຫັນດີຮັບຮອງເອົາ **"ໃບອະນຸຍາດນຳໃຊ້ ເຄື່ອງບັນທຶກການ ຂາຍສິນຄ້າ ແລະ ບໍລິການ"** ເປັນເອກະສານທາງການຂອງຂະແໜງສ່ວຍສາອາກອນ;

**ມາດຕາ 2:** ໃບອະນຸຍາດນຳໃຊ້ເຄື່ອງບັນທຶກການ ຂາຍສິນຄ້າ ແລະ ບໍລິການ ສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ນຳໃຊ້ ເຄື່ອງບັນທຶກການ ຂາຍສິນຄ້າ ແລະ ບໍລິການ ພ້ອມທັງໄດ້ກຳນົດຂອບເຂດ ສິດ ແລະ ໜ້າທີ່ ໄດ້ສັງລວມໄວ້ຢູ່ໃນ QR Code;

**ມາດຕາ 3:** ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຈົ່ງ ຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບ ນີ້ຢ່າງເຂັ້ມງວດ;

**ມາດຕາ 4:** ເອກະສານສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າກົມ**

ບຸນປະເສີດ **ສີກຸນລະບຸດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມສ່ວຍສາອາກອນ ເລກທີ /ກສອ

ນະຄອນຫລວງວຽງຈັນ, ວັນທີ

# ໃບອະນຸຍາດນຳໃຊ້

## ເຄື່ອງບັນທຶກການ ຂາຍສິນຄ້າ ແລະ ບໍລິການ

- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ສະບັບ(ປັບປຸງ) ເລກທີ 66/ສພຊ ລົງວັນທີ 17 ມິຖຸນາ 2019;
- ອີງຕາມ ຄຳແນະນຳກ່ຽວກັບການ ຄຸ້ມຄອງ ແລະ ນຳໃຊ້ ໃບເກັບເງິນສະເພາະ ທີ່ອອກດ້ວຍເຄື່ອງບັນທຶກການ ຂາຍສິນຄ້າ ແລະ ບໍລິການ ສະບັບເລກທີ 1178/ກງ, ລົງວັນທີ 20 ເມສາ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການ ຄຸ້ມຄອງ ແລະ ນຳໃຊ້ ເຄື່ອງບັນທຶກການ ຂາຍສິນຄ້າ ແລະ ບໍລິການ ສະບັບເລກທີ 1179/ກງ, ລົງວັນທີ 20 ເມສາ 2017.

**ກົມສ່ວຍສາອາກອນ ອະນຸຍາດນຳໃຊ້ ເຄື່ອງບັນທຶກການ ຂາຍສິນຄ້າ ແລະ ບໍລິການ ໃຫ້ແກ່:**

- ບໍລິສັດ ..........................................................................................................................................;
- ເລກປະຈຳຕົວຜູ້ເສຍອາກອນ ☐☐☐☐☐☐☐☐☐☐☐☐☐☐☐;
- ສະຖານທີ່ດຳເນີນທຸລະກິດ ຕັ້ງຢູ່ບ້ານ ................................, ເມືອງ .........................., ນະຄອນຫຼວງວຽງຈັນ;
- ໂທລະສັບ ...........................

• **ຂໍ້ມູນເຄື່ອງບັນທຶກ ການຂາຍສິນຄ້າ ແລະ ບໍລິການ**

- **ປະເພດເຄື່ອງ:**

☐ ເຄື່ອງບັນທຶກຢູ່ຈຸດຂາຍ (Point Of Sale); ☐ ເຄື່ອງບັນທຶກເງິນສົດ (Cash Register Machine);

☐ ເຄື່ອງບັນທຶກການ ຂາຍສິນຄ້າ ແລະ ການບໍລິການ ລະບົບບັນຊີຄອມພິວເຕີ (CAS);

☐ ເຄື່ອງບັນທຶກເງິນສົດ ຫຼື ເຄື່ອງບັນທຶກຢູ່ຈຸດຂາຍທີ່ຕັ້ງດ່ຽວ (Stand-Alone CRM/POS Machine);

☐ ໂປຣກຣາມ ຫຼື ເຄື່ອງບັນທຶກການ ຂາຍສິນຄ້າ ແລະ ບໍລິການ ອື່ນໆ ..........................................................

☐ ໂປຣກຣາມ, ເຄື່ອງບັນທຶກການ ຂາຍສິນຄ້າ ແລະ ບໍລິການ ທີ່ນຳໃຊ້ ສາມາດເຊື່ອມຕໍ່ (API) ເຂົ້າກັບລະບົບຂໍ້ມູນຂ່າວສານ ສ່ວຍສາອາກອນ (TaxRis).

28/2/2022

- **ຂໍ້ມູນອື່ນໆ:** ..................................................................................................................................
- **ສະໜອງ ຫຼື ພັດທະນາ ໂດຍ:** ....................................................................................................

**ໝາຍເຫດ:**

ບຸນປະເສີດ ສີກຸນລະບຸດ

1. ໃຫ້ຕິດໃບອະນຸຍາດນຳໃຊ້ ໄວ້ຢູ່ບ່ອນເປີດເຜີຍ ໃນສະຖານທີ່ດຳເນີນທຸລະກິດ ສາມາດເຫັນໄດ້ ຢ່າງຈະແຈ້ງ ແລະ ຊັດເຈນ;
2. ໃບອະນຸຍາດການນຳໃຊ້ໃບເກັບເງິນ ສະບັບນີ້ມີອາຍຸການນຳໃຊ້ 01 ປີ ເຊິ່ງໄດ້ກຳນົດຕາມປີສາກົນ;
3. ລາຍລະອຽດ ສິດ ແລະ ໜ້າທີ່ ການນຳໃຊ້ໃບເກັບເງິນ ລະບຸໄວ້ ຕາມ **QR Code** ດ້ານລຸ່ມ.

ຫົວໜ້າກົມ

ເຄື່ອງໝາຍ: ☑ ໝາຍເຖິງ: ອະນຸຍາດ 1

☒ ໝາຍເຖິງ: ບໍ່ອະນຸຍາດ